# ຄຳເພງ (ເພງສັຣເສີນ)

| | |
|---|---|
| ໃຈຄວາມສຳຄັນ | ຄວາມສັຣເສີນ |
| ຂໍ້ຄວາມສຳຄັນ | ບົດ ໑໐໓:໑ |
| ຈຳນວນບົດ | ໑໕໐ ບົດ |

## ໑. ຄຳນຳ

ໜັງສືເພງສັຣເສີນ ເປັນ ໜັງສື ທີ່ໄດ້ ຮັບຄວາມນິຍົມ ຫລາຍ ທີ່ສຸດ ເພາະຄົນໃນທຸກ ໆ ສໄມເມື່ອອ່ານບົດເພງນີ້ກໍ່ໄດ້ຮັບຄວາມເລົ້າໂລມແລະ ຄວາມ ບັນເທີງໃຈບົດເພງເປັນເໝືອນກະຈົກທີ່ ໃຊ້ສ່ອງ ເບິ່ງຈິດໃຈມະນຸດ ວ່າເປັນຢ່າງໃດແທ້

## ໒ ວ່າດ້ວຍຜູ້ຂຽນ

ຜູ້ຂຽນໜັງສືນີ້ ມີຢູ່ຫລາຍຄົນດ້ວຍກັນເພາະເປັນໜັງສືທີ່ ມີຫລາຍ ບົດຄືມີເຖິງ ໑໕໐ ບົດ ແລະຮູ້ຊື່ຜູ້ຂຽນແຕ່ພຽງ ໑໐໐ ບົດເທົ່ານັ້ນສ່ວນ ອີກ ໕໐ ບົດນັ້ນບໍ່ຮູ້ວ່າໃຜຂຽນ

| | |
|---|---|
| ໂມເຊ | ໄດ້ຂຽນ ໑ ບົດ (ບົດ ທີ ໙໐) |
| ດາວິດ | ໄດ້ຂຽນ ໗໓ ບົດ |
| ຊະໂລໂມນ | ໄດ້ຂຽນ ໒ ບົດ |
| ອາຊາບ | ໄດ້ຂຽນ ໑໒ ບົດ |
| ລູກທ່ານໂກເຣ | ໄດ້ຂຽນ ໑໑ ບົດ |

ເຫມານ ໄດ້ຂຽນ ໑ ບົດ (ບົດທີ ໘໘)

ເອຖານ ໄດ້ຂຽນ ໑ ບົດ (ບົດທີ ໘໙)

## ໓. ວ່າດ້ວຍເນື້ອຄວາມ

ການສັຣເສີນແລະການຂາບໄຫວ້ພຣະເຈົ້າ

ສະແດງໃຫ້ຮູ້ຈິດໃຈເມື່ອເວລາຖືກລຳບາກຖືກທົດລອງແລະເມື່ອເວລາສແວງຫາພຣະເຈົ້າ

ສະແດງວ່າຜູ້ຂຽນມີຄວາມເຊື່ອໃນການຊ່ອຍໃຫ້ພົ້ນຂອງພຣະເຈົ້າແລະເຊື່ອໃນຄວາມເມດຕາຂອງພຣະອົງ

ມີຫລາຍບົດໄດ້ກ່ຽວກັບພຣະເຢຊູ ແລະມີຫລາຍເທື່ອທີ່ດາວິດໄດ້ເວົ້າເຖິງເມຊີອາຄືພຣະເຢຊູຄຣິດດ້ວຍພຣະວິນຍານບໍຣິສຸດ

ສອນເຣື່ອງຄວາມສຸກວ່າບຸກຄົນທີ່ຊອບທັມກໍເປັນສຸກ (ບົດທີ ໑)
ຜູ້ທີ່ພຣະເຈົ້າຊົງໃຫ້ອະໄພແລ້ວກໍເປັນສຸກ (ບົດທີ ໓໔; ໔໑:໒,໓; ໙໔:໑໒–໑໕; ໑໑໒:໑–໒; ໑໔໔:໑໕ ໆລໆ)

## ໔. ວ່າດ້ວຍຄວາມສຳຄັນຂອງເພງ

### ໑. ຖືກນຳມາຈົດໄວ້ໃນພຣະຄັມພີໃໝ່

ບໍ່ມີໜັງສືໃດໃນພຣະຄັມພີເດີມທີ່ຖືກນຳມາຈົດໄວ້ໃນພຣະຄັມພີໃໝ່ຫລາຍເທົ່າບົດເພງຄືພວກອັຄສາວົກໄດ້ຍົກເອົາບົດເພງຂຶ້ນມີສຸດກ່ຽວກັບພຣະເຢຊູ (ຄຳເພງ ໒໓:໒໔, ໑:໑໖–໒໐; ໒:໒໕; ບົດເພງ ໑໖:໘–໑໑; ກິຈການ

໒:໓໔–໓໕; ບົດເພງ ໑໑໐:໑ ກິຈການ ໔:໑໑; ບົດເພງ ໑໑໘:໒໒; ກິຈການ ໔:໒໕–໒໖; ບົດເພງ ໒:໑–໒)

## ການທູນຂໍໃຫ້ພຣະເຈົ້າລົງໂທດພວກສັດຕຣູ

ເມື່ອທ່ານອ່ານຄຳອ້ອນວອນຂອງກະສັດດາວິດ ທ່ານອາດຈະຮູ້ສຶກແປກໃຈທີ່ເຫັນກະສັດດາວິດຊົງຂໍໃຫ້ພຣະເຈົ້າຊົງລົງໂທດພວກສັດຕຣູຂອງພຣະເຈົ້າ (ເພງ ໑໓໙:໒໑–໒໒) ເພາະເຮົາຮູ້ດີວ່າກະສັດດາວິດນັ້ນມີໃຈດີອ່ອນຫວານສຸພາບແລະມີນ້ຳໃຈຢາກຊ່ອຍຜູ້ອື່ນ (ຊາເມືອນທີ ໑ ບົດ ໒໔:໕–໘; ໒໖:໘–໑໑) ແຕ່ທີ່ເພິ່ນອ້ອນວອນດັ່ງນີ້ກໍດ້ວຍວ່າເພິ່ນຍັງບໍ່ຮູ້ຈັກຄຳສັ່ງສອນຂອງພຣະເຢຊູເພາະວ່າກະສັດດາວິດຊົງເກີດກ່ອນພຣະເຢຊູ (ມັດທາຍ ໕:໔໓–໔໔) ແລະເພິ່ນບໍ່ຢາກເຮັດອັນໃດຮຸນແຮງກັບພວກສັດຕຣູ ສນັ້ນເພິ່ນຈຶ່ງໄດ້ອ້ອນວອນຕໍ່ພຣະເຈົ້າ ໃຫ້ລົງໂທດພວກເຂົາ

## ໕. ການທຳນວາຍເຖິງພຣະເຢຊູ

ໃນໜັງສືບົດເພງສແດງວ່າພຣະເຢຊູເປັນຄື:

໑. ພຣະມະຫາກະສັດ ບົດ ໒;໒໐, ໒໑,໒໔, ໗໒,໑໑໐

໒ ປະໂຣຫິດ ບົດ ໔໐ ເຮັບເຣີ ໑໐:໕–໑໐

ນ. ຜູ້ລ້ຽງ ໃນບົດ ໒໒,໒໓,໒໔, ມີຄວາມດັ່ງນີ້

ໃນອະດີດ: ຜູ້ລ້ຽງໄດ້ສລະຊີວິດຂອງຕົນ (ໂຢຮັນ: ໑໐:໑໑)

ປະຈຸບັນ: ພຣະເຢຊູເປັນຜູ້ລ້ຽງຂອງຂ້າ (ບົດ ໒໓; ເຮັບເຣີ ໑໓:໒໐)

ໃນອະນາຄົດ: ພຣະເຢຊູຈະເປັນພຣະມະຫາກະສັດແຫ່ງຣັດສມີ (ບົດ ໒໔; ໑ ເປໂຕ ໕:໔)

ຫີນດານ ບົດ ໒໗:໕; ໔໐:໓; ໒໘:໑; ໓໑:໓; ໗໑:໓; ໔໒:໑໐; ໖໑:໓; ໖໒:໓,໗,໘; ໗໘:໒໐; ໘໙:໒໗; ໙໔:໒໒; (ຕາມພົງສີ ໑ ໂກລິນໂທ ໑໐:໔)

## ຄ. ໃຈຄວາມຂອງບົດຕ່າງໆ

### ກ. ວ່າດ້ວຍບົດສຳຄັນ

ບົດ ໑ ຄົນຊອບທັມແລະຄົນຊົ່ວ

,, ໒໓ ກ່ຽວກັບຜູ້ລ້ຽງ

,, ໔໖ ພຣະເຈົ້າເປັນທີ່ເພິ່ງ (ເພງແຫ່ງລຶເຕຣ)

,, ໙໑ ເພງຂອງພວກທະຫານ

,, ໑໐໓ ຄວາມຮັກຂອງພຣະເຈົ້າ

,, ໑໑໙ ພຣະທັມຂອງພຣະເຈົ້າຢາກວ່າທຸກບົດ

,, ໑໓໐ ເພງທີ່ອອກຈາກໃຈ

ຂ. ວ່າດ້ວຍບົດທີ່ຮູ້ສຶກບາບແລະກິນແໜງໃຈ

ບົດ ໖ ການຢ້ານໂທດ

" ໓໘ ຄວາມໜັກແຫ່ງບາບ

" ໕໑ ການຍອມບາບແລະຫລັບຕັ້ງໃຈໃໝ່

" ໓໒ ການພົ້ນຈາກບາບ

" ໑໐໒ ການກິນແໜງໃຈຂອງພວກອິສຣາເອັນ ເມື່ອເວລາເປັນທາດ

" ໑໔໓ ການອຸ້ນອາຍຂອງຄົນທີ່ເຊື່ອ

ຄ. ວ່າດ້ວຍບົດທີ່ເປັນການອ້ອນວອນ ແລະການຮ້ອງຂໍ

ບົດ ໔,໖,໑໖,໑໗,໓໘,໓໙,໔໑,໘໖,໙໐,໑໔໒.

ງ. ວ່າດ້ວຍບົດທີ່ເປັນຄວາມສັຣເສີນ

ບົດ ໘,໑໙,໘໑,໙໒,໙໕, ໑໐໐,໑໔໕–໑໕໐.

ຈ. ວ່າດ້ວຍບົດທີ່ສແດງວ່າຄວາມເຊື່ອຄືແນວໃດ

ບົດ ໘,໓໓,໙໔,໑໐໔,໑໓໙,

ສ. ວ່າດ້ວຍບົດທີ່ເປັນຄຳສອນແລະຄຳຕັກເຕືນ

ບົດ ໓໗,໔໕,໔໙໔,໗໘,໑໐໓, ເຖິງ ໑໐໗

ຊ. ວ່າດ້ວຍບົດທີ່ທຳນວາຍເຖິງເມຊີອາ

ບົດ ໒,໑໖,໒໒,໒໔,໔໐,໔໑,໔໒,໔໕,໖໘-໖໙,໗໒,

໘໙,໑໑໐,໑໑໘

## ກ. ການແບ່ງເປັນເຫລັ້ມ

ເຫລັ້ມທີ ໑ ບົດ ໑–໔໑ ຂຽນໂດຍດາວິດ

,, ໒ ບົດ ໔໒–໗໒ ຂຽນໂດຍລູກທ່ານໂກເຣ

,, ໓ ບົດ ໗໓–໘໙ ຂຽນໂດຍອາຊາບ

,, ໔ ບົດ ໙໐–໑໐໖ ບໍ່ຮູ້ຜູ້ຂຽນ

,, ໕ ບົດ ໑໐໗–໑໕໐ ຂຽນໂດຍດາວິດ ໑໕ ບົດ